ໃນການຈັດພິມຜົນງານຂອງອາຈານ ມະຫາສິລາ ຄັ້ງນີ້ ເຖິງວ່າເພິ່ນເອງໄດ້ດັດແປງແກ້ໄຂບາງຈຸດ ດັ່ງທີ່ເວົ້າມາຂ້າງເທິງນັ້ນແລ້ວກໍຕາມ ແຕ່ກໍຄົງບໍ່ອາດປາສະຈາກຂໍ້ຂາດຕົກບົກພ່ອງໄດ້ ເຊັ່ນ ນັກປະຫວັດສາດໄທ (ຍຸກປະຈຸບັນ) ບາງຄົນມີຄວາມເຫັນວ່າ ການຈັດລຽງລຳດັບວົງກະສັດລາວ ແລະ ຊ່ວງໄລຍະເວລາການຄອງຣາດ ຍັງຄົງມີຄວາມສັບສົນຢູ່ຫລາຍ ທັງບໍ່ມີການນຳຂໍ້ມູນມາສອບທານກັບຫລັກຖານອື່ນໆ ຕະຫລອດຈົນບັນດາຈາຣຶກທີ່ປາກົດຢູ່ຢ່າງຫລວງຫລາຍໃນຫົວເມືອງສຳຄັນຕ່າງໆ ທາງຝັ່ງຊ້າຍ ແລະ ຝັ່ງຂວາຂອງແມ່ນ້ຳຂອງ ໃນເຂດກຳແພງນະຄອນວຽງຈັນ ແລະ ທາງພາກອີສານຂອງປະເທດໄທ ຕາມຄວາມເຫັນຂອງຂ້າພະເຈົ້າແລ້ວ ການທີ່ເພິ່ນບໍ່ໄດ້ແກ້ໄຂ ຫລື ຕື່ມເຕີມຈຸດນີ້ ອາດເນື່ອງຈາກສາຍເຫດສອງປະການ ຄື:

ນຶ່ງ: ເວລານັ້ນ ເພິ່ນບໍ່ທັນໄດ້ຮັບ ຫລືຮູ້ຂໍ້ມູນໃຫມ່ໆເຫລົ່ານີ້ ແລະ ສອງ: ຮູ້ແລ້ວແຕ່ບໍ່ເຫັນວ່າມັນສຳຄັນ ແລະ ຈຳເປັນຕ້ອງໄດ້ປ່ຽນແປງ (ຈະເຫັນວ່າ ກວ່າຈະໄດ້ພິມປຶ້ມແຕ່ລະຄັ້ງນັ້ນ ຕ້ອງໃຊ້ເວລາຫລາຍສິບປີ) ຄວນປ່ອຍໄວ້ເປັນວຽກງານຂອງຄົນຮຸ່ນຫລັງ ດັ່ງນັ້ນ ຖ້າທ່ານຜູ້ອ່ານທ່ານໃດສົນໃຈເລື່ອງສຳລັບວົງກະສັດລາວແຕ່ສະໄຫມບູຮານ ຢາກກວດສອບຄືນ ກໍສາມາດເຮັດໄດ້ໂດຍຊອກຫາຜົນງານຂອງຜູ້ອື່ນໆ ມາອ່ານປຽບທຽບໃສ່ ລວມທັງບົດວິທະຍານິພົນປະຣິນຍາເອກຂອງຂ້າພະເຈົ້າ ກໍອາດຈະເປັນເອກະສານນຶ່ງ ທີ່ທ່ານອາດນຳມາສຶກສາກວດສອບຄືນໄດ້ ວິທະຍານິພົນດັ່ງກ່າວ ມີສຳເນົາຢູ່ຫໍສະຫມຸດແຫ່ງຊາດລາວ ແລະ ຫໍສະຫມຸດຂອງມະຫາວິທະຍາໄລແຫ່ງຊາດລາວ.

***ທ່ານຜູ້ອ່ານ ທີ່ນັບຖື !***

ການປັບປຸງຢ່າງລຽນຕິດເນື້ອໃນວິຊາການນັ້ນ ມີຄວາມຈຳເປັນສຳລັບຜົນງານປະຫວັດສາດທຸກປະເພດ ຂອງທຸກປະເທດ ທຸກຊາດໃນໂລກ ທັງນີ້ ເພື່ອໃຫ້ທັນກັບເຫດການສະພາບແວດລ້ອມ ໃກ້ຄຽງຄວາມເປັນຈິງທີ່ສຸດ ເທົ່າທີ່ຈະເປັນໄດ້ ແລະ ສອດຄ່ອງກັບສັງຄົມຂອງທ້ອງຖິ່ນນັ້ນໆ ຕົວຢ່າງປຶ້ມ **ປະຫວັດສາດເອເຊຍອາຄະເນ** ຂອງ **ດີ. ຈ. ອີ. ຮອນ** ໃນພາສາອັງກິດ ທີ່ພິມມາເປັນສິບໆຄັ້ງນັ້ນ ກໍມີການດັດແປງປັບປຸງເປັນປະຈຳ ພິມຄັ້ງໃດກໍມີການດັດແປງເທື່ອນັ້ນ ເວົ້າລວມ ຕາບໃດທີ່ຜູ້ຂຽນຍັງມີຊີວິດຢູ່ ຕາບນັ້ນຂໍ້ມູນຫລັກຖານທີ່ຖືກຄົ້ນພົບໃຫມ່ໆ ກໍຈະຖືກນຳມາຕື່ມເຕີມໃສ່ທັນທີ ແລະ ຫລາຍຄັ້ງ ຂໍ້ມູນໃຫມ່ນັ້ນມັກມີລັກສະນະຂັດແຍ່ງກັບຂໍ້ມູນເກົ່າ ອັນເຮັດໃຫ້ການຕີລາຄາສະພາບການ ແລະ ທັດສະນະບາງອັນຕ້ອງປ່ຽນໄປ ທັງນີ້ກໍເພາະວ່າ ອຸປະກອນເຕັກໂນໂລຊີແຕ່ລະຍຸກບໍ່ຄືກັນ. ທ່ານ**ມະຫາສິລາ**ເອງ ໄດ້ທຸ່ມເທສຸມກຳລັງສະຕິປັນຍາຂອງເພິ່ນ ໃສ່ຜົນງານປະຫວັດສາດເຫລົ່ານີ້ຈົນເຖິງວາລະສຸດທ້າຍຂອງຊີວິດ ຈຶ່ງນັບວ່າເພິ່ນເປັນຜູ້ມີຄຸນສົມບັດຂອງນັກປະຫວັດສາດຢ່າງແທ້ຈິງ ບໍ່ຜິດແຜກກັບນັກປະຫວັດສາດສາກົນຜູ້ອື່ນໆ.